ສຳນັກງານໃຫຍ່

ເລກທີ: 001 /ທຄຕລ.ສພບ.2025
ນະຄອນຫຼວງວຽງຈັນ, ວັນທີ: 18 ມີນາ 2025

ມະຕິ

ກອງປະຊຸມສະພາບໍລິຫານ ທຄຕລ ສະໄໝສາມັນ
ຄັ້ງທີ 01 ປະຈຳປີ 2024, ວັນທີ 18 ມີນາ 2025

ກອງປະຊຸມສະພາບໍລິຫານຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ສະໄໝສາມັນ ຄັ້ງທີ 01 ປະຈຳປີ 2025 (ຕໍ່ໄປນີ້ຮຽກວ່າ "ກອງປະຊຸມ") ໄດ້ເປີດຂຶ້ນໃນເວລາ 08:30-11:30 ໂມງ ຂອງວັນທີ 18 ມີນາ 2025 ທີ່ສຳນັກງານໃຫຍ່ ທຄຕລ, ໂດຍການເປັນປະທານຂອງ ທ່ານ ປອ ອາຄົມ ປຣະເສີດ ຮອງປະທານສະພາບໍລິຫານ. ມີສະມາຊິກສະພາບໍລິຫານຈຳນວນ 06 ທ່ານ ເຂົ້າຮ່ວມ (ໃນນີ້ ມີກຳມະການສະພາບໍລິຫານຈຳນວນ 01 ທ່ານ ບໍ່ສາມາດເຂົ້າຮ່ວມກອງປະຊຸມຄື: ທ່ານ ສອນໄຊ ສີລາເພັດ ບໍ່ສາມາດເຂົ້າຮ່ວມກອງປະຊຸມ ໃນຄັ້ງນີ້), ມີຄະນະອຳນວຍການ ແລະ ພະແນກກ່ຽວຂ້ອງ ເຂົ້າຮ່ວມເປັນຜູ້ສັງເກດການ.

ກອງປະຊຸມ ໄດ້ປຶກສາຫາລື ແລະ ມີມະຕິຕົກລົງ ດັ່ງນີ້:

1) ຮັບຊາບການລາຍງານກ່ຽວກັບການປ່ຽນແປງປະທານສະພາບໍລິຫານ ທຄຕລ ເພື່ອນຳສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024 ພິຈາລະນາ ແລະ ຮັບຮອງ.
2) ຮັບຮອງຜົນການກວດສອບເອກະລາຍງານການເງິນຂອງ ທຄຕລ ປະຈຳປີ 2024 ຕາມມາດຕະຖານບັນຊີລາວທີ່ກວດສອບໂດຍຜູ້ກວດສອບອິດສະລະ;
3) ຮັບຮອງສັດສ່ວນການຈັດສັນກຳໄລປະຈຳປີ 2024 ເຂົ້າຄັງຕ່າງໆ ເພື່ອນຳສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024 ພິຈາລະນາ ແລະ ຮັບຮອງ;
4) ຮັບຮອງເງິນປັນຜົນປະຈຳປີ 2024 ເພື່ອນຳສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024 ພິຈາລະນາ ແລະ ຮັບຮອງ:
    - ເງິນປັນຜົນ: 100 ກີບ/ຮຸ້ນ;
    - ມື້ປິດປຶ້ມທະບຽນຜູ້ຖືຮຸ້ນເພື່ອຮັບເງິນປັນຜົນ: 25 ເມສາ 2025;
    - ມື້ຈ່າຍເງິນປັນຜົນ: 14 ພຶດສະພາ 2025.
5) ຮັບຮອງແຜນດຳເນີນທຸລະກິດປະຈຳປີ 2025 ເພື່ອນຳສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024 ພິຈາລະນາ ແລະ ຮັບຮອງ.
6) ຮັບຮອງແຜນຍຸດທະສາດຂອງ ທຄຕລ ໄລຍະປີ 2025-2029 ເພື່ອນຳສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024 ພິຈາລະນາ ແລະ ຮັບຮອງ.
7) ຮັບຮອງທາງດ້ານຫຼັກການກ່ຽວກັບການຮັບໜີ້ຕ້ອງຮັບມາເປັນຫຼັກຊັບຄ້ຳປະກັນ.

ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບຸລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-3, 223243-4, 255080-5
ແຟັກ: (856-21) 213202, 223012, 223245, Website: http:/www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

8) ຮັບຮອງທາງດ້ານຫຼັກການກ່ຽວກັບການປ່ອຍສິນເຊື່ອໃຫ້ແກ່ໂຄງການກໍ່ສ້າງ ທີ່ຕິດພັນກັບໂຄງການຂອງລັດຖະບານໃນຕໍ່ໜ້າ.

9) ຮັບຮອງການປ່ອຍກູ້ໃຫ້ລູກຄ້າບໍລິສັດ 3 ລາຍ ທີ່ຂຶ້ນກັບສິດອະນຸມັດຂອງສະພາບໍລິຫານ.

10) ຮັບຮອງການແຕ່ງຕັ້ງຜູ້ກວດສອບອິດສະລະປະຈຳປີ 2025 ເພື່ອນຳສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024 ພິຈາລະນາ ແລະ ຮັບຮອງ.

11) ພິຈາລະນາຮັບຮອງແຜນຈັດກອງປະຊຸມຜູ້ຖືຮຸ້ນປະຈຳປີ 2024 ດັ່ງນີ້:

- ມື້ປິດປຶ້ມທະບຽນຜູ້ຖືຮຸ້ນ ເພື່ອເຂົ້າຮ່ວມກອງປະຊຸມ: ວັນທີ 27 ມີນາ 2025;
- ມື້ເປີດກອງປະຊຸມຜູ້ຖືຮຸ້ນ: 30 ເມສາ 2025, ເວລາ 14:30 – 16:30 ໂມງ;
- ສະຖານທີ່: ຫ້ອງປະຊຸມ ໂຮງແຮມ ລາວພລາຊາ;
- ວາລະກອງປະຊຸມ:
  - ວາລະທີ 01: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມຜູ້ຖືຮຸ້ນ ສະໄໝສາມັນ ທຄຕລ ປະຈຳປີ 2023;
  - ວາລະທີ 02: ພິຈາລະນາ ແລະ ຮັບຮອງ ບົດລາຍງານຜົນການດຳເນີນງານ ແລະ ເອກະສານລາຍງານການເງິນຂອງ ທຄຕລ ປະຈຳປີ 2024;
  - ວາລະທີ 03: ພິຈາລະນາ ແລະ ຮັບຮອງການຈັດສັນກຳໄລປະຈຳປີ 2024 ເຂົ້າຄັງຕ່າງໆ ແລະ ຈ່າຍເງິນປັນຜົນ;
  - ວາລະທີ 04: ພິຈາລະນາ ແລະ ຮັບຮອງເອົາແຜນການປີ 2025;
  - ວາລະທີ 05: ພິຈາລະນາ ແລະ ຮັບຮອງເອົາແຜນຍຸດທະສາດພັດທະນາ ທຄຕລ ໄລຍະ 2025-2029;
  - ວາລະທີ 06: ພິຈາລະນາ ແລະ ຮັບຮອງເອົາຜູ້ກວດສອບອິດສະລະປະຈຳປີ 2025;
  - ວາລະທີ 07: ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງປະທານ ແລະ ສະມາຊິກສະພາບໍລິຫານ ທຄຕລ;
  - ວາລະອື່ນໆ (ຖ້າມີ).

12) ຮັບຮອງແຜນຈັດກອງປະຊຸມສະພາບໍລິຫານ ແລະ ຄະນະກຳມະການສະພາບໍລິຫານ ປີ 2025;

13) ຮັບຮອງການການແຕ່ງຕັ້ງ ແລະ ການສັບຊ້ອນບຸກຄະລາກອນ ຂັ້ນຄະນະພະແນກ 1 ຕຳແໜ່ງ.

ປະທານສະພາບໍລິຫານ

ປອ ອາຄົມ ປຣະເສີດ